**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ ເລກທີ 0018 / ສທ

ນະຄອນຫຼວງວຽງຈັນ, ວັນທີ 08 JAN 2016

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງໜ່ວຍງານ ສາທາລະນະສຸກປະຈຳດ່ານສາກົນ ໃນຂອບເຂດທົ່ວປະເທດ

- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 178/ນຍ, ລົງວັນທີ 05 ເມສາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ;
- ອີງຕາມ ກົດໝາຍວ່າດ້ວຍອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ກົດໝາຍວ່າດ້ວຍອາຫານ (ສະບັບປັບປຸງ) ສະບັບເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ (ສະບັບປັບປຸງ) ສະບັບເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ການຄົ້ນຄ້ວາ ແລະ ການສະເໜີ ຂອງ ກົມຈັດຕັ້ງ ແລະ ພະນັກງານ.

## ລັດຖະມົນຕີວ່າການກະຊວງສາທາລະນະສຸກ ອອກຂໍ້ຕົກລົງ

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງໜ່ວຍງານສາທາລະນະສຸກປະຈຳດ່ານສາກົນ ໃນຂອບເຂດທົ່ວປະເທດ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງໜ່ວຍງານດັ່ງກ່າວ ໃນການ ເຝົ້າລະວັງ ກັກກັນພະຍາດຕິດຕໍ່, ພະຍາດຕິດຕໍ່ຈາກສັດສູ່ຄົນ, ກວດກາອາຫານ, ຜະລິດຕະພັນອາຫານ, ອາຫານເສີມການແພດ, ຢາຫຼວງ,

ຢາພື້ນເມືອງ, ຊັບພະຍາກອນທຳມະຊາດທີ່ເປັນຢາ, ອຸປະກອນການແພດ, ຜະລິດຕະພັນເສີມສຸຂະພາບ, ເຄື່ອງສຳອາງ, ຢາເສບຕິດ, ວັດຖຸອອກລິດຕໍ່ຈິດ - ປະສາດ, ເຄມີຄວບຄຸມ ແລະ ເຄມີອັນຕະລາຍໃຊ້ໃນຄົວເຮືອນ ແນໃສ່ຈັດຕັ້ງປະຕິບັດວຽກງານສາທາລະນະສຸກປະຈຳດ່ານສາກົນໃຫ້ມີປະສິດທິຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ໜ່ວຍງານສາທາລະນະສຸກປະຈຳດ່ານສາກົນ ແມ່ນໜ່ວຍງານໜຶ່ງຂອງຂະແໜງສາທາລະນະສຸກ, ຂັ້ນສູນກາງ ແມ່ນ ກົມຄວບຄຸມພະຍາດຕິດຕໍ່, ກົມອາຫານ ແລະ ຢາ ແລະ ກອງກວດກາອາຫານ ແລະ ຢາ ເປັນຜູ້ຮັບຜິດຊອບ. ສ່ວນຂັ້ນທ້ອງຖິ່ນ ແມ່ນຂຶ້ນກັບພະແນກສາທາລະນະສຸກແຂວງ - ນະຄອນຫຼວງ ທີ່ມີດ່ານສາກົນ.

ໜ່ວຍງານດັ່ງກ່າວ ມີພາລະບົດບາດ ໃນການເຝົ້າລະວັງ, ສະກັດກັ້ນ ແລະ ກັກກັນພະຍາດຕິດຕໍ່, ພະຍາດຕິດຕໍ່ຈາກສັດສູ່ຄົນ, ໃນດ່ານເຂົ້າ - ອອກ ຂອງຜູ້ໂດຍສານ, ກວດກາການນຳເຂົ້າ - ສົ່ງອອກ, ສົ່ງຜ່ານ, ກວດກາອາຫານ, ຜະລິດຕະພັນອາຫານ, ອາຫານເສີມການແພດ, ຢາຫຼວງ, ຢາພື້ນເມືອງ, ຊັບພະຍາກອນທຳມະຊາດທີ່ເປັນຢາ, ອຸປະກອນການແພດ, ຜະລິດຕະພັນເສີມສຸຂະພາບ, ເຄື່ອງສຳອາງ, ຢາເສບຕິດ, ວັດຖຸອອກລິດຕໍ່ຈິດ -ປະສາດ, ເຄມີຄວບຄຸມ ແລະ ເຄມີອັນຕະລາຍໃຊ້ໃນຄົວເຮືອນ, ລວມທັງໃຫ້ການບໍລິການປິ່ນປົວສຸກເສີນແກ່ຄົນເຈັບ ຢູ່ດ່ານສາກົນ ກ່ອນນຳສົ່ງໄປໂຮງໝໍ ທີ່ມີເງື່ອນໄຂຖ້າເປັນພະຍາດຕິດຕໍ່ຮ້າຍແຮງ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

1. ປະຕິບັດວຽກງານຕາມການມອບໝາຍຂອງກະຊວງສາທາລະນະສຸກ, ແຈ້ງການຂອງກົມຄວບຄຸມພະຍາດຕິດຕໍ່, ກົມປິ່ນປົວ, ກົມອາຫານ ແລະ ຢາ, ກອງກວດກາອາຫານ ແລະ ຢາ, ພະແນກສາທາລະນະສຸກແຂວງ - ນະຄອນຫຼວງ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງ;
2. ເຝົ້າລະວັງ ແລະ ສະກັດກັ້ນພະຍາດຕິດຕໍ່, ກວດກາກັ້ນກອງຜູ້ໂດຍສານ, ການຂົນສົ່ງສິນຄ້າ, ໃຫ້ການເບິ່ງແຍງ ແລະ ປິ່ນປົວຄົນເຈັບສຸກເສີນໃນດ່ານສາກົນ;
3. ແຍກປ່ຽວຄົນເຈັບເມື່ອມີອາການທີ່ສົງໃສວ່າເປັນພະຍາດຕິດຕໍ່ຮ້າຍແຮງ ຫຼື ພະຍາດທີ່ຕ້ອງແຍກປ່ຽວຕາມລະບຽບການເຝົ້າລະວັງພະຍາດຕິດຕໍ່ ແລະ ໂຕ້ຕອບຕໍ່ການລະບາດ ຕາມກົດລະບຽບ ດ້ານສາທາລະນະສຸກຂອງສາກົນ;
4. ພົວພັນຮ່ວມມື ກັບພາກສ່ວນທີ່ກ່ຽວຂ້ອງ ໃນວຽກງານເຝົ້າລະວັງ ກັກກັນພະຍາດຕິດຕໍ່, ໃຫ້ການບໍລິການ, ປິ່ນປົວສຸກເສີນໃນດ່ານ ເມື່ອພົບຄົນເຈັບກໍລະນີສົງໃສຕິດເຊື້ອພະຍາດຮ້າຍແຮງ ເພື່ອນຳສົ່ງໂຮງໝໍທີ່ມີເງື່ອນໄຂ;
5. ກວດກາການນຳເຂົ້າ - ສົ່ງອອກ, ສົ່ງຜ່ານ, ກວດກາອາຫານ, ຜະລິດຕະພັນອາຫານ, ອາຫານເສີມການແພດ, ຢາຫຼວງ, ຢາພື້ນເມືອງ, ຊັບພະຍາກອນທຳມະຊາດທີ່ເປັນຢາ, ອຸປະກອນການແພດ, ຜະລິດຕະພັນເສີມສຸຂະພາບ, ເຄື່ອງສຳອາງ, ຢາເສບຕິດ, ວັດຖຸອອກລິດຕໍ່ຈິດ-ປະສາດ, ເຄມີຄວບຄຸມ ແລະ ເຄມີອັນຕະລາຍໃຊ້ໃນຄົວເຮືອນ ທີ່ຂະແໜງສາທາລະນະສຸກຄຸ້ມຄອງ ເພື່ອຮັບປະກັນຄວາມປອດໄພຂອງ

ຜູ້ບໍລິໂພກ ແລະ ບໍ່ອະນຸຍາດໃຫ້ນໍາເຂົ້າພາຫະນະທີ່ບັນທຸກຜະລິດຕະພັນ, ວັດຖຸທີ່ສົງໃສວ່າມີການປົນເປື້ອນສານເຄມີ, ເຊື້ອພະຍາດທີ່ກໍ່ໃຫ້ເກີດ ມີຜົນກະທົບຕໍ່ສຸຂະພາບຂອງປະຊາຊົນ;

6. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນຂົງເຂດສາທາລະນະສຸກ ແລະ ຂະແໜງການອື່ນໆ ທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາການນໍາເຂົ້າ - ສົ່ງອອກ, ສົ່ງຜ່ານ, ກວດກາອາຫານ, ຜະລິດຕະພັນອາຫານ, ອາຫານເສີມການແພດ, ຢາຫຼວງ, ຢາພື້ນເມືອງ, ຊັບພະຍາກອນທໍາມະຊາດທີ່ເປັນຢາ, ອຸປະກອນການແພດ, ຜະລິດຕະພັນເສີມສຸຂະພາບ, ເຄື່ອງສໍາອາງ, ຢາເສບຕິດ, ວັດຖຸອອກລິດຕໍ່ຈິດ - ປະສາດ, ເຄມີຄວບຄຸມ ແລະ ເຄມີອັນຕະລາຍໃຊ້ໃນຄົວເຮືອນ ລວມທັງການເກັບຕົວຢ່າງ ເພື່ອນໍາມາກວດກາຕິດຕາມຄຸນນະພາບຄວາມປອດໄພ;
7. ລາຍງານ ແລະ ສະເໜີບັນຫາຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານ ໃຫ້ຂັ້ນເທິງຊາບ ແຕ່ລະໄລຍະພ້ອມທັງລາຍງານສະພາບການຕ່າງໆ ໃຫ້ຂະແໜງການຕ່າງໆ ທີ່ກ່ຽວຂ້ອງໃນດ່ານ ເພື່ອຮັບຊາບ;
8. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 4 ຂອບເຂດສິດ**

1. ເຝົ້າລະວັງ ແລະ ຄວບຄຸມພະຍາດຕິດຕໍ່, ຕິດຕາມກວດກາກັ່ນກອງຜູ້ໂດຍສານ, ທີ່ເຂົ້າມາ ສປປ ລາວ;
2. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການກວດກາພາຫະນະທຸກປະເພດ ທີ່ມີການສົງໃສ ຫຼື ມີການແຈ້ງການເຕືອນ ຈາກພາກສ່ວນກ່ຽວຂ້ອງຕາມ ກົດໝາຍ ແລະ ລະບຽບການ;
3. ກວດກາສິ່ງຂອງທີ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຕ່າງໆ ທີ່ນໍາເຂົ້າ - ສົ່ງອອກ ຜະລິດຕະພັນຕ່າງໆ ເຊັ່ນ: ກວດກາອາຫານ, ຜະລິດຕະພັນອາຫານ, ອາຫານເສີມການແພດ, ຢາຫຼວງ, ຢາພື້ນເມືອງ, ຊັບພະຍາກອນທໍາມະຊາດທີ່ເປັນຢາ, ອຸປະກອນການແພດ, ຜະລິດຕະພັນເສີມສຸຂະພາບ, ເຄື່ອງສໍາອາງ, ຢາເສບຕິດ, ວັດຖຸອອກລິດຕໍ່ຈິດ - ປະສາດ, ເຄມີຄວບຄຸມ ແລະ ເຄມີອັນຕະລາຍໃຊ້ໃນຄົວເຮືອນ ທີ່ຂະແໜງສາທາລະນະສຸກຄຸ້ມຄອງ ຕາມກົດໝາຍ ແລະ ລະບຽບການ;
4. ສະເໜີໃຫ້ພາກສ່ວນກ່ຽວຂ້ອງ ເພື່ອປັບປຸງແກ້ໄຂ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
5. ເຂົ້າຮ່ວມກິດຈະກໍາຕ່າງໆ ຕາມພາລະບົດບາດຂອງຕົນ ໃນດ່ານຊາຍແດນທີ່ຕັ້ງຢູ່;
6. ມີສິດເຂົ້າ - ອອກດ່ານ ຕາມໜ້າທີ່ທີ່ການຈັດຕັ້ງມອບໝາຍໃຫ້ ກໍລະນີເກີດເຫດການສຸກເສີນທາງດ້ານສາທາລະນະສຸກ ຕາມການອະນຸຍາດຂອງພາກສ່ວນກ່ຽວຂ້ອງ;
7. ປະຕິບັດສິດຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກຂອງໜ່ວຍງານສາທາລະນະສຸກປະຈໍາດ່ານສາກົນ**

ໜ່ວຍງານສາທາລະນະສຸກປະຈໍາດ່ານສາກົນ ປະກອບມີສອງໜ່ວຍງານ ທີ່ເປັນເອກະລາດ ຕາມສາຍງານວິຊາສະເພາະຂອງໃຜລາວ, ຊຶ່ງມີພາລະບົດບາດ, ໜ້າທີ່, ຂອບເຂດສິດ ການປະຕິບັດງານ ທີ່ໄດ້ກໍານົດສະເພາະ ເປັນຕົ້ນວິທີການກວດກາ, ສະຖານທີ່ປະຕິບັດງານທີ່ແຍກກັນ ແລະ ມີກາປະທັບສະເພາະຂອງໜ່ວຍງານໃຜລາວ:

1. ໜ່ວຍງານ ເຝົ້າລະວັງ ແລະ ຄວບຄຸມພະຍາດຕິດຕໍ່ ຂຶ້ນກັບ ກົມຄວບຄຸມພະຍາດຕິດຕໍ່ ແລະ ຂະແໜງຄວບຄຸມພະຍາດຕິດຕໍ່ ຂອງພະແນກສາທາລະນະສຸກແຂວງ - ນະຄອນຫຼວງ.
2. ໜ່ວຍງານ ກວດກາອາຫານ ແລະ ຢາ ຂຶ້ນກັບ ກອງກວດກາອາຫານ ແລະ ຢາ, ກົມອາຫານ ແລະ ຢາ ແລະ ຂະແໜງອາຫານ ແລະ ຢາ ຂອງພະແນກສາທາລະນະສຸກແຂວງ - ນະຄອນຫຼວງ.

## ມາດຕາ 6 ໂຄງປະກອບບຸກຄະລະກອນ ແລະ ການແຕ່ງຕັ້ງ

### ກ. ໂຄງປະກອບ ຂອງບຸກຄະລະກອນ

ໂຄງປະກອບ ຂອງສອງໜ່ວຍງານດັ່ງກ່າວ ປະກອບມີຄື:

1. ໜ່ວຍງານເຝົ້າລະວັງ ແລະ ຄວບຄຸມພະຍາດຕິດຕໍ່ ປະກອບດ້ວຍ:
    1. ຫົວໜ້າໜ່ວຍງານ
    2. ຮອງຫົວໜ້າໜວ່ຍງານ
    3. ຫົວໜ້າຈຸງານເຝົ້າລະວັງ ແລະ ຄວບຄຸມພະຍາດຕິດຕໍ່
    4. ພະນັກງານເຝົ້າລະວັງ ແລະ ຄວບຄຸມພະຍາດຕິດຕໍ່
    5. ພະນັກງານແພດປິ່ນປົວ
2. ໜ່ວຍງານ ກວດກາອາຫານ ແລະ ຢາ ປະກອບດ້ວຍ:
    1. ຫົວໜ້າໜ່ວຍງານ
    2. ຮອງຫົວໜ້າໜວ່ຍງານ
    3. ຫົວໜ້າຈຸງານກວດກາອາຫານ ແລະ ຢາ
    4. ພະນັກງານກວດກາອາຫານ ແລະ ຢາ

### ຂ. ການແຕ່ງຕັ້ງ

1. ໜ່ວຍງານເຝົ້າລະວັງ: ຫົວໜ້າ ແລະ ຮອງຫົວໜ້າໜ່ວຍງານເຝົ້າລະວັງ ໄດ້ຮັບການແຕ່ງຕັ້ງ ຈາກ ທ່ານຫົວໜ້າພະແນກສາທາລະນະສຸກແຂວງ - ນະຄອນຫຼວງ ມີໜ້າທີ່ຮັບຜິດຊອບໂດຍກົງ ຕໍ່ຜົນສຳເລັດ ຂໍ້ຂາດຕົກບົກຜ່ອງທຸກຢ່າງ ແລະ ການຄຸ້ມຄອງບໍລິຫານວຽກງານ ຂອງໜ່ວຍງານ; ຫົວໜ້າຈຸງານ ແລະ ພະນັກງານເຝົ້າລະວັງ ແລະ ຄວບຄຸມພະຍາດຕິດຕໍ່ ໄດ້ຮັບການແຕ່ງຕັ້ງຈາກ ພະແນກສາທາລະນະສຸກແຂວງ - ນະຄອນຫຼວງ ມີໜ້າທີ່ຮັບຜິດຊອບ ຕໍ່ໃນການເຝົ້າລະວັງ ກັກກັນພະຍາດຕິດຕໍ່, ພະຍາດຕິດຕໍ່ຈາກສັດສູ່ຄົນ ປະຈຳດ່ານ.
2. ໜ່ວຍງານກວດກາອາຫານ ແລະ ຢາ: ຫົວໜ້າ ຫຼື ຮອງຫົວໜ້າໜ່ວຍງານກວດກາອາຫານ ແລະ ຢາ ແລະ ພະນັກງານກວດກາອາຫານ ແລະ ຢາ ແມ່ນໄດ້ຮັບການແຕ່ງຕັ້ງ ຈາກພະແນກສາທາລະນະສຸກແຂວງ - ນະຄອນຫຼວງ ບົນພື້ນຖານການເຫັນດີເປັນເອກະພາບຈາກກອງກວດກາອາຫານ ແລະ ຢາ, ກົມອາຫານ ແລະ ຢາ ມີໜ້າທີ່ຮັບຜິດຊອບ ໃນການກວດກາອາຫານ, ຜະລິດຕະພັນອາຫານ, ອາຫານເສີມການແພດ, ຢາຫຼວງ, ຢາພື້ນເມືອງ, ຊັບພະຍາກອນທຳມະຊາດທີ່

ເປັນຢາ, ອຸປະກອນການແພດ, ຜະລິດຕະພັນເສີມສຸຂະພາບ, ເຄື່ອງສໍາອາງ, ຢາເສບຕິດ, ວັດຖຸອອກລິດຕໍ່ຈິດ - ປະສາດ, ເຄມີຄວບຄຸມ ແລະ ເຄມີອັນຕະລາຍໃຊ້ໃນຄົວເຮືອນ ປະຈໍາດ່ານ.

## ໝວດທີ IV

## ຫຼັກການເຄື່ອນໄຫວ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 7 ຫຼັກການເຄື່ອນໄຫວ

ໜ່ວຍງານສາທາລະນະສຸກປະຈໍາດ່ານສາກົນ ເຄື່ອນໄຫວວຽກງານ ແລະ ດໍາເນີນຕາມຫຼັກການລວມດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ລະບອບຫົວໜ້າດຽວ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ - ລັດຖະກອນທຸກລະດັບ;
2. ທຸກການເຄື່ອນໄຫວວຽກງານ ຂອງແຕ່ລະໜ່ວຍງານ ຂຶ້ນກັບສາຍງານວິຊາສະເພາະ ຂອງໃຜລາວຢ່າງເປັນເອກະລາດ ແລະ ອີງໃສ່ລະບຽບກົດໝາຍ ແລະ ຫຼັກການລວມ ຂອງກະຊວງສາທາລະນະສຸກ, ນໍາເອົາແນວທາງນະໂຍບາຍ ຂອງພັກ - ລັດຖະບານ ແລະ ຂອງກະຊວງສາທາລະນະສຸກ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນເປັນຈິງ;
3. ຫົວໜ້າໜ່ວຍງານປະຈໍາດ່ານ ເປັນຜູ້ລົງລາຍເຊັນທຸກໆເອກະສານທີ່ກ່ຽວຂ້ອງກັບສາຍງານວິຊາສະເພາະຂອງຕົນ ຕາມນິຕິກໍາ ທີ່ໄດ້ກໍານົດ ,ກໍລະນີມີຂໍ້ສົງໃສທີ່ບໍ່ສາມາດຕັດສິນ ດ້ວຍຕົນເອງ ໃຫ້ພົວພັນກັບສາຍງານວິຊາສະເພາະທີ່ຕົນຂຶ້ນກັບ.

### ມາດຕາ 8 ແບບແຜນວິທີເຮັດວຽກ

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ປະຕິບັດ ແລະ ແກ້ໄຂວຽກງານ ຢ່າງມີຈຸດສຸມ ແລະ ມີຄາດໝາຍໃນແຕ່ລະໄລຍະ;
2. ປະສານ ສົມທົບຢ່າງແໜ້ນແຟ້ນ ກັບທຸກພາກສ່ວນທີ່ກ່ຽວຂ້ອງຢູ່ໃນດ່ານສາກົນ ແລະ ສາຍຕັ້ງທີ່ຕົນຂຶ້ນກັບ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ທີ່ໄດ້ຮັບການມອບໝາຍ;
3. ປະຕິບັດລະບອບປະຊຸມ, ລະບອບລາຍງານສ່ອງແສງ, ກວດກາຢ່າງເຂັ້ມງວດ, ມີການຕີລາຄາຜົນໄດ້ - ຜົນເສຍ ພ້ອມທັງປະຕິບັດລະບອບລາຍງານສ່ອງແສງໃຫ້ຂັ້ນເທິງຂອງຕົນ ເປັນປົກກະຕິ ປະຈໍາເດືອນ, 03 ເດືອນ, 06 ເດືອນ ແລະ ປະຈໍາປີ.
4. ກະຊວງສາທາລະນະສຸກ, ກົມຄວບຄຸມພະຍາດຕິດຕໍ່, ກອງກວດກາອາຫານ ແລະ ຢາ, ກົມອາຫານ ແລະ ຢາ ແລະ ຂະແໜງການທີ່ກ່ຽວຂ້ອງ ມີການຕິດຕາມກວດກາ, ປະເມີນ ແລະ ປະສານງານ ຕາມລະບຽບກົດໝາຍ.

## ໝວດທີ V

## ບົດບັນຍັດສຸດທ້າຍ

### ມາດຕາ 9 ຕາປະທັບ

- ໜ່ວຍງານສາທາລະນະສຸກປະຈໍາດ່ານສາກົນ ມີຕາປະທັບເປັນຂອງຕົນເອງ ໃນການເຄື່ອນໄຫວວຽກງານປະຈໍາດ່ານສາກົນ.
- ສໍາລັບຈຸງານແມ່ນມີກາກວດຜ່ານ ເປັນຂອງຕົນເອງ.

**ມາດຕາ 10 ການຈັດຕັ້ງປະຕິບັດ**

ໜ່ວຍງານສາທາລະນະສຸກປະຈຳດ່ານສາກົນ ໃນຂອບເຂດທົ່ວປະເທດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 11 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ນຳໃຊ້ປ່ຽນແທນ ຂໍ້ຕົກລົງ ສະບັບເລກທີ 3171/ສທ, ລົງວັນທີ 03 ທັນວາ 2015.

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ສາດສະດາຈານ ດຣ ເອກສະຫວ່າງ ວົງວິຈິດ